Education
Public Schools

# ຈົດໝາຍຕິດຕາມ ວັນ Nitbusters

## Nitbusters Day follow up letter

ຊື່ຂອງເດັກ ________________________________ ຫ້ອງຮຽນ/ກຸ່ມ ____________________

Child's name Class/Group

ພໍ່ແມ່/ຜູ້ປົກຄອງທີ່ຮັກແພງ

ລູກຂອງທ່ານໄດ້ຖືກກວດເບິ່ງເຫົາ. ຜົນຂອງການກວດໄດ້ສະແດງໃຫ້ເຫັນຢູ່ຂ້າງລຸ່ມນີ້.

- ☐ ບໍ່ພົບເຫົາ
  No head lice were found.
- ☐ ໄດ້ພົບໄຂ່ເຫົາ
  Nits (eggs) were found.
- ☐ ໄດ້ພົບທັງໂຕເຫົາ ແລະ ໄຂ່ເຫົາ.
  Head lice and nits (eggs) were found.

ຖ້າລູກທ່ານມີເຫົາ ຫຼື ໄຂ່ເຫົາ Nitbusters ຂໍແນະນຳໃຫ້ທ່ານຮັກສາລູກທ່ານແລະສືບ ຕໍ່ກວດເບິ່ງໄຂ່ເຫົາຫຼືໂຕເຫົາທຸກໆ ສອງມື້. ທາງເລືອກຂອງວິທີການຮັກສາໄດ້ຖືກອະ ທິບາຍໄວ້ຢູ່ໃນເຈັ້ຍຂໍ້ມູນທີ່ຄັດຕິດມາພ້ອມນີ້.

ໂດຍຕ່າງໜ້າຂອງໂຄງການ Nitbusters ພວກເຮົາຂໍສະແດງຄວາມຂອບໃຈມາຍັງທ່ານທີ່ທ່ານໄດ້ອະນຸຍາດໃຫ້ລູກທ່ານ ເຂົ້າຮ່ວມໃນ ວັນ Nitbusters. ດຽວນີ້ໂຮງຮຽນພວກເຮົາ ມີທີມ Nitbusters ທີ່ຜ່ານການເຝິກຫັດ ມາ ແລ້ວ. ທີມທີ່ຜ່ານ ການເຝິກຫັດຂອງພວກເຮົາ ຈະເປີດ ວັນ Nitbusters ຢູ່ໂຮງຮຽນຕື່ມອີກ ຖ້າວ່າ ມີ ຄວາມຕ້ອງການ. ຖ້າທ່ານມີ ຄຳຖາມໃດໆ ກ່ຽວກັບໂຄງການນີ້ ຫຼື ທ່ານ ຢາກຈະເປັນ ຜູ້ ອາສາສມັກຂອງ ວັນ Nitbusters ໃນເທື່ອ ໜ້າ ກະຣຸນາຕິດຕໍ່ ທ່ານຄູໃຫຍ່.

ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍທ່ານ ໃນການຕິດຕໍ່ຫາທ່ານຄູໃຫຍ່ ກະຣຸນາ ໂທຣະສັບ ຫາບໍຣິການ ນາຍພາສາ ທາງ ໂທຣະສັບຕາມ ໝາຍເລກ 131 450 ແລ້ວ ຂໍເອີ້ນາຍ ພາສາ ທີ່ປາກພາສາ ລາວ. ຜູ້ຮັບສາຍຈະຫາເອີ້ນາຍ ພາສາມາຊ່ວຍໃນ ການ ໂອ້ລົມຂອງທ່ານ. ທ່ານບໍ່ ຕ້ອງເສັຍຄ່າໃດໆ ໃນ ບໍຣິການນີ້.

ຂໍ້ມູນນີ້ແມ່ນຢູ່ບົນພື້ນຖານຂອງຂໍ້ມູນທີ່ມີໄວ້ ໃຫ້ທີ່ເວັບໄຊຕ໌ຂອງ Nitbusters ກົມ ອະນາມັຍ NSW.